**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງສຶກສາທິການ ແລະ ກິລາ

ພະແນກສຶກສາທິການ ແລະ ກິລາ

ເລກທີ 414 /ສກນວ

ນະຄອນຫຼວງວຽງຈັນ, ວັນທີ ໒໘ ພຶດສະພາ ໒໐໒໖

# ໜັງສືແຈ້ງເຊີນປະມູນ

1. ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ເຂົ້າຍື່ນຊອງປະມູນ ສໍາລັບໂຄງການ: ກໍ່ສ້າງໂຮງຮຽນ ແລະ ສະໜອງເຟີນີເຈີ້ ໂຮງຮຽນອະນຸບານ ແລະ ປະຖົມສົມບູນ ນາພອກ, ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ ໃຫ້ສໍາເລັດ 36 ເດືອນ;
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເໝາະສົມ;
4. ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ຂະແໜງບໍລິຫານ ແລະ ການເງິນ ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ, ໂທລະສັບ 021 252 351, 020 5555 1549 ( ໃນໂມງລັດຖະການ);
5. ເອກະສານປະມູນຄົບຊຸດທີ່ເປັນພາສາລາວສາມາດຊື້ໄດ້ໂດຍຜູ້ປະມູນທີ່ສົນໃຈໂດຍການຍື່ນໜັງສືສະເໜີຫາທີ່ຢູ່ຂ້າງລຸ່ມນີ້, ເລີ່ມແຕ່ວັນທີ 2 ມິຖຸນາ 2026 ເປັນຕົ້ນໄປ, ໃນລາຄາ 1,000,000 ກີບ, ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊໍາລະຕ້ອງຈ່າຍເປັນຈ່າຍເປັນເງິນສົດ;
6. ຊອງປະມູນຕ້ອງສົ່ງທີ່ຢູ່ລຸ່ມນີ້,ໃນເວລາ ຫລື ກ່ອນເວລາ 14:00 ໂມງ ຂອງວັນທີ 8 ກໍລະກົດ 2026 ທີ່ຫ້ອງປະຊຸມ ຊັ້ນ 04 ຕຶກ ຫ້ອງການຊົ່ວຄາວພະແນກສຶກສາທິການ ແລະ ກິລາ ທີ່ຕັ້ງຢູ່ບ້ານ ຈອມມະນີ ເມືອງ ໄຊເສດຖາ ນະຄອນຫຼວງວຽງຈັນ (ຢູ່ໃກ້ກັບໂຮງແຮມແສງແກ້ວ ແລະ ໂຮງແຮມລາດສະວົງ ຫຼັກ6 ), ຖ້າຫາກບໍລິສັດໃດບໍ່ມາ ຫຼື ມາຊ້າເກີນ 10 ນາທີຖືວ່າສະລະສິດ. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ອະນຸຍາດ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ;

   ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 14:00 ໂມງ, ວັນທີ 8 ກໍລະກົດ 2026 ທີ່ຫ້ອງປະຊຸມ ຊັ້ນ 04 ຕຶກ ຫ້ອງການຊົ່ວຄາວພະແນກສຶກສາທິການ ແລະ ກິລາ ທີ່ຕັ້ງຢູ່ບ້ານ ຈອມມະນີ ເມືອງ ໄຊເສດຖາ ນະຄອນຫຼວງວຽງຈັນ (ຢູ່ໃກ້ກັບໂຮງແຮມແສງແກ້ວ ແລະ ໂຮງແຮມລາດສະວົງ ຫຼັກ6 ), ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນໍາ;
7. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນດ້ວຍກຽດ ຫລື ໜັງສືຄໍ້າປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າຂອງການຄໍ້າປະກັນບໍ່ໃຫ້ຫລຸດ 2% (ສ່ວນຮ້ອຍ) ຂອງລາຄາປະມູນ ມາພ້ອມ.

**ຫົວໜ້າພະແນກ**

ພະແນກ ສຶກສາທິການ ແລະ ກິລາ

ນ. ລີປາເອ້ຍ ລີບົວປາວ

ສະແກນດ້ວຍ CamScanner